**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງໄຊຍະບູລີ

ອົງການພັດທະນາ ແລະ ບໍລິຫານຕົວເມືອງ

ເລກທີ 296/ອພບຕ.ຊບ

ໄຊຍະບູລີ, ວັນທີ 10 ມິຖຸນາ 2026

## ໜັງສືເຊີນເຂົ້າຮ່ວມການປະມູນ

1. ອົງການພັດທະນາ ແລະ ບໍລິຫານຕົວເມືອງໄດ້ນໍາໃຊ້ຊ່ອງເງິນ ກອງທຶນພັດທະນາຊຸມຊົນ ໂຄງການໄຟຟ້າພະລັງງານຄວາມຮ້ອນຫົງສາ ປະຈໍາປີ 2026, ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ເຂົ້າຮ່ວມການປະມູນ ໂຄງການ ສໍາຫຼວດ-ອອກແບບ ສະໜາມຂີ້ເຫຍື້ອແຫ່ງໃໝ່ໂຄກອີ່ບົວຫຼັກ9 ເມືອງໄຊຍະບູລີ.

2. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເອກະສານຄໍາແນະນໍາກ່ຽວ ກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດ, ໃບທະບຽນວິສະຫະກິດທາງດ້ານການກໍ່ສ້າງ-ສ້ອມແປງເຄຫາສະຖານ, ສໍາຫຼວດອອກແບບ ແລະໃບມອບພັນທະອາກອນປີ 2026 ຫລື 2025 ທີ່ຖືກຕ້ອງຕາມກົດໝາຍ

4. ບໍລິສັດໃດທີ່ສົນໃຈຂໍເຊີນຕິດຕໍ່ຂໍ້ມູນໄດ້ທີ່ ຂະແໜງບໍລິຫານ-ຈັດຕັ້ງແຜນການ ແລະ ການເງິນ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມໂມງລັດຖະການ ເລີ່ມແຕ່ວັນທີ 10/6/2026 ເຖິງວັນທີ 10/7/2026 ໃນລາຄາ **500,000 ກີບ/ຊອງ,** ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ).

5. ຊອງປະມູນໂຄງການ ສໍາຫຼວດ-ອອກແບບ ສະໜາມຂີ້ເຫຍື້ອແຫ່ງໃໝ່ໂຄກອີ່ບົວຫຼັກ9 ເມືອງໄຊຍະບູລີ, ຈະຕ້ອງໄດ້ສົ່ງບໍ່ໃຫ້ກາຍເວລາ 08:00 ໂມງ ຂອງວັນທີ 10/7/2026, ທີ່ຂະແໜງບໍລິຫານ, ແຜນການ ແລະ ການເງິນ ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຊອງປະມູນສົ່ງຊ້າກ່ວາເວລາທີ່ໄດ້ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍ ບໍ່ມີການເປີດຊອງ ແລະ ຈະດໍາເນີນເປີດຊ່ອງໃນເວລາ 08:30 ໂມງ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກໍາມະການ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.

6. ສອບຖາມຂໍ້ມູເພີ່ມເຕີມກະລຸນາຕິດຕໍ່ພົວພັນ: ທ່ານ ໄຊຍະສິດ ສີມສີ, ໂທ: 020 55190029, ຮອງຫົວໜ້າຂະແໜງ ຈັດຕັ້ງ - ປະຕິບັດໂຄງການ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມທີ່ຢູ່ຂ້າງລຸ່ມນີ້:

**ຊື່ສໍານັກງານ:** ອົງການພັດທະນາ ແລະ ບໍລິຫານຕົວເມືອງ.

**ທີ່ຕັ້ງ:** ບ້ານ ທ່ານາ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ.

**ເລກໂທລະສັບ:** 074 211 441

**ຫົວໜ້າອົງການ**

ແຂວງໄຊຍະບູລີ ອົງການພັດທະນາ ບໍລິຫານຕົວເມືອງ ເມືອງໄຊຍະບູລີ

ບົວແພງ ອິນທະວົງ

สแกนด้วย CamScanner